# Course: Agriculture Economics

# Week 13

## Agricultural Commodity Market in Advance

**Phavone Keodouangkham**

**Souphanouvong University**

ວິຊາ: ເສດຖະສາດກະສິກຳ

# ອາທິດທີ 13

*ຕະຫຼາດສິນຄ້າກະເສດລ່ວງໜ້າ*

# Review

- ຄວາມໝາຍຂອງຕະຫຼາດ (Market)
- ການຕະຫຼາດ (Marketing) ແລະ ໜ້າທີ່ການຕະຫຼາດ(Marketing Function)
- ຄ່າໃຊ້ຈ່າຍການຕະຫຼາດ (Marketing Costs) ສ່ວນເຫຼື່ອມການຕະຫຼາດ (Marketing Margins) ແລະ ສ່ວນແບ່ງຂອງຊາວກະສິກອນ (Farmer s Share)
- ການວິເຄາະຜົນກະທົບຂອງການປ່ຽນແປງຄ່າໃຊ້ຈ່າຍການຕະຫຼາດ ຫຼື ສ່ວນເຫຼື່ອມການຕະຫຼາດຕໍ່ລາຄາສິນຄ້າທີ່ຜູ້ບໍລິໂພກຈ່າຍ ລາຄາສິນຄ້າທີ່ຊາວກະສິກອນໄດ້ຮັບ ແລະ ປະລິມານຜົນຜະລິດ.

# Outline

- ຄວາມໝາຍ ແລະ ລັກສະນະຂອງຕະຫຼາດຂາຍສິນຄ້າລ່ວງໜ້າ (Futures Market)
- ໜ້າທີ່ຂອງຕະຫຼາດຊື້ຂາຍສິນຄ້າກະເສດລ່ວງໜ້າ
- ອົງປະກອບຂອງຕະຫຼາດສິນຄ້າກະເສດລ່ວງໜ້າ
- ເງື່ອນໄຂ ແລະ ລັກສະນະສິນຄ້າກະເສດທີ່ເໝາະສົມໃນການເຮັດສັນຍາຊື້ຂາຍໃນຕະຫຼາດລ່ວງໜ້າ
- ຄວາມສໍາພັນລະຫວ່າງລາຄາສິນຄ້າໃນຕະຫຼາດຊື້ຂາຍທັນທີ ກັບ ລາຄາໃນຕະຫຼາດຊື້ຂາຍລ່ວງໜ້າ
- ປະໂຫຍດຂອງຕະຫຼາດສິນຄ້າກະເສດລ່ວງໜ້າ

# 1. ຄວາມໝາຍ ແລະ ລັກສະນະຂອງຕະຫຼາດຊື້ຂາຍລ່ວງໜ້າ

ຕະຫຼາດຊື້ຂາຍລ່ວງໜ້າໝາຍເຖິງຕະຫຼາດທີ່ຜູ້ຊື້ ແລະ ຜູ້ຂາຍເຮັດຂໍ້ຕົກລົງຊື້ຂາຍສັນຍາຊື້ຂາຍລ່ວງໜ້າ (Futures Contract) ໂດຍທີ່ຜູ້ຕ້ອງການຊື້ຂາຍອາດຈະສັນຍາຊື້ຂາຍລ່ວງໜ້າໃໝ່ ຫຼື ຊື້ຂາຍລ່ວງໜ້າທີ່ມີຢູ່ແລ້ວໃນຕະຫຼາດຊື້ຂາຍລ່ວງໜ້າ ເຊິ່ງໃນສັນຍາຈະລະບຸຊະນິດ ແລະ ປະເພດຂອງສິນຄ້າ, ຄຸນນະພາບ, ລາຄາ, ເວລາ ແລະ ສະຖານທີ່ມອບສິ່ງຊັດເຈນ

# ສັນຍາຊື້ຂາຍລ່ວງໜ້າ (Forward Contract) ແລະ ສັນຍາຊື້ຂາຍໃນອານາຄົດ (Futures Contract)

**ສັນຍາຊື້ຂາຍລ່ວງໜ້າ (Forward Contract)** ຈະແຕກຕ່າງຈາກສັນຍາຂໍ້ຕົກລົງໃນອານາຄົດໂດຍສັນຍາຂໍ້ຕົກລົງລ່ວງໜ້າເປັນການເຮັດສັນຍາສະເພາະບຸກຄົນລະຫວ່າງຜູ້ຊື້ ແລະ ຜູ້ຂາຍ ຫຼື ແມ່ນຂໍ້ຕົກລົງທາງກົດໝາຍລະຫວ່າງຜູ້ຊື້ ແລະ ຜູ້ຂາຍ

# ສັນຍາຊື້ຂາຍລ່ວງໜ້າ (Forward Contract)

## 1.ອົງປະກອບຂອງສັນຍາ

- ປະເພດສິນຄ້າ
- ຈຳນວນ/ປະລິມານ
- ລາຄາທີ່ຕົກລົງກັນ
- ວັນທີສົ່ງມອບສິນຄ້າ
- ສະຖານທີ່ສົ່ງມອບ
- ມາດຕະຖານຄຸນນະພາບ

## 2.ລັກສະນະສຳຄັນ

- ເປັນມາດຕະຖານດຽວກັນ
- ສາມາດຊື້-ຂາຍໄດ້ໃນຕະຫຼາດ
- ມີການວາງເງິນຄ້ຳປະກັນ
- ມີການຊຳລະສະສາງທຸກມື້

# ສັນຍາຊື້ຂາຍລ່ວງໜ້າ (Forward Contract)

## 3.ສິດ ແລະ ພັນທະ

- ຜູ້ຂາຍ: ຕ້ອງສົ່ງມອບສິນຄ້າຕາມກຳນົດ
- ຜູ້ຊື້: ຕ້ອງຊຳລະເງິນຕາມລາຄາທີ່ຕົກລົງ
- ທັງສອງຝ່າຍຕ້ອງວາງເງິນຄ້ຳປະກັນ

## 4.ປະໂຫຍດ

•ປ້ອງກັນຄວາມສ່ຽງດ້ານລາຄາ

•ວາງແຜນທຸລະກິດໄດ້ລ່ວງໜ້າ

•ສາມາດລົງທຶນເພື່ອກຳໄລ

# ສັນຍາຊື້ຂາຍລ່ວງໜ້າ (Forward Contract)

**5.ຄວາມສ່ຽງ**:

- ການປ່ຽນແປງລາຄາໃນຕະຫຼາດ
- ຄວາມສ່ຽງດ້ານການສົ່ງມອບ
- ຄວາມສ່ຽງດ້ານການຊຳລະເງິນ

**6.ການປິດສະຖານະ**

- ສົ່ງມອບສິນຄ້າຕາມສັນຍາ
- ຊື້-ຂາຍກັບຄືນກ່ອນກຳນົດ
- ຊຳລະສະສາງດ້ວຍເງິນສົດ

# ສັນຍາຊື້ຂາຍລ່ວງໜ້າ (Futures Contract) ແລະ ສັນຍາຊື້ຂາຍລ່ວງໜ້າ (Forward Contract)

**ສັນຍາຊື້ຂາຍລ່ວງໜ້າ (Futures Contract)** ເປັນການຊື້ຂາຍໃບສັນຍາເຊິ່ງຈະມີການຊື້ສິນຄ້າກັນຈິງໜ້ອຍຫຼາຍໂດຍສັນຍາຊື້ຂາຍລ່ວງໜ້າຈະຖືກສະສາງກ່ອນເຖິງວັນຮັບ ຫຼື ສົ່ງມອບສິນຄ້າຈິງ ຜູ້ທີ່ເຮັດສັນຍາອາດຈະບໍ່ມີ ຫຼື ຄອບຄອງສິນຄ້າທີ່ຈະຂາຍ ວັດຖຸປະສົງຫຼັກຂອງການເຮັດສັນຍາຊື້ຂາຍລ່ວງໜ້າກໍ່ເພື່ອຫຼຸດຄວາມສ່ຽງຈາກການຜັນປ່ຽນລາຄາໃນອານາຄົດ ຫຼື ເພື່ອເກັງກຳໄລ

# ສັນຍາຊື້ຂາຍລ່ວງໜ້າ (Futures Contract)

## 1.ຄວາມໝາຍ

- ເປັນສັນຍາທີ່ກຳນົດເງື່ອນໄຂໂດຍຄູ່ສັນຍາເອງ
- ມີຜົນຜູກພັນທາງກົດໝາຍ
- ຊື້-ຂາຍນອກຕະຫຼາດ (Over the Counter)

## 2.ລັກສະນະພິເສດ

- ສາມາດປັບແຕ່ງຕາມຄວາມຕ້ອງການ
- ບໍ່ມີມາດຕະຖານຕາຍຕົວ
- ບໍ່ສາມາດໂອນສິດໄດ້ງ່າຍ
- ບໍ່ມີການຊຳລະສະສາງປະຈຳວັນ

# ສັນຍາຊື້ຂາຍລ່ວງໜ້າ (Futures Contract)

### 3.ເງື່ອນໄຂທີ່ສາມາດຕົກລົງກັນ:

- ປະລິມານສິນຄ້າ
- ຄຸນນະພາບ
- ລາຄາ
- ວັນທີ ແລະ ສະຖານທີ່ສົ່ງມອບ
- ເງື່ອນໄຂການຊໍາລະເງິນ

### 4.ຂໍ້ດີ:

- ຍືດຍຸ່ນສູງ
- ເໝາະກັບຄວາມຕ້ອງການສະເພາະ
- ບໍ່ຕ້ອງວາງເງິນຄໍ້າປະກັນ
- ຕົ້ນທຶນການເຮັດທຸລະກໍາຕໍ່າ

# ສັນຍາຊື້ຂາຍລ່ວງໜ້າ (Futures Contract)

## 5.ຂໍ້ເສຍ:

- ມີຄວາມສ່ຽງດ້ານການຜິດສັນຍາ
- ຂາດສະພາພຄ່ອງ
- ຍາກໃນການຍົກເລີກ
- ບໍ່ມີຕະຫຼາດຮອງ

## 6.ການຊໍາລະສະສາງ:

•ສ່ວນຫຼາຍຕ້ອງສົ່ງມອບສິນຄ້າຈິງ

•ຊໍາລະເງິນເຕັມມູນຄ່າຕາມກໍານົດ

•ບໍ່ມີການປັບລາຄາລະຫວ່າງທາງ

# ຈຸດປະສົງຫຼັກຕະຫຼາດສິນຄ້າກະເສດລ່ວງໜ້າ

ຊ່ວຍຊາວກະສິກອນ
ຫຼຸດຄວາມສ່ຽງຈາກ
ການປ່ຽນແປງລາຄາ

ຊ່ວຍໃຫ້ຜູ້ຊື້ສາມາດ
ກຳນົດລາຄາລ່ວງ
ໜ້າໄດ້

ສ້າງຄວາມໝັ້ນຄົງ
ໃຫ້ກັບຕະຫຼາດ
ສິນຄ້າກະສິກຳ

# ວິທີການຕະຫຼາດສິນຄ້າກະເສດລ່ວງໜ້າ

| | | |
|---|---|---|
| ຜູ້ຂາຍ (ຊາວກະສິກອນ) ສາມາດຂາຍຜົນຜະລິດລ່ວງໜ້າໃນລາຄາທີ່ຕົກລົງກັນ | ຜູ້ຊື້ຕົກລົງຊື້ໃນລາຄາທີ່ກຳນົດ ແລະ ຈະໄດ້ຮັບສິນຄ້າໃນອະນາຄົດ | ມີການວາງເງິນຄ້ຳປະກັນເພື່ອຮັບປະກັນການປະຕິບັດສັນຍາ |

# ໜ້າທີ່ຂອງຕະຫຼາດຊື້ຂາຍສິນຄ້າກະເສດລ່ວງໜ້າ

- ອຳນວຍຄວາມສະດວກດ້ານສະຖານທີ່ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ
- ກຳນົດເກນ ແລະ ຫຼັກປະກັນຕ່າງໆ
- ກຳນົດແນວທາງການດຳເນີນງານຕໍ່ຜູ້ທີ່ບໍ່ປະຕິບັດຕາມສັນຍາ
- ໃຫ້ບໍລິການກ່ຽວກັບຂໍ້ມູນສິນຄ້າກະເສດ

# ໜ້າທີ່ຂອງຕະຫຼາດຊື້ຂາຍສິນຄ້າກະເສດລ່ວງໜ້າ

## 1.ການຄໍ້າປະກັນລາຄາ

- ຊ່ວຍປ້ອງກັນຄວາມສ່ຽງຈາກການປ່ຽນແປງລາຄາ
- ຊາວກະສິກອນສາມາດກໍານົດລາຄາຂາຍລ່ວງໜ້າໄດ້
- ຜູ້ຊື້ສາມາດຮູ້ຕົ້ນທຶນທີ່ແນ່ນອນ

# ໜ້າທີ່ຂອງຕະຫຼາດຊື້ຂາຍສິນຄ້າກະເສດລ່ວງໜ້າ

**2.ການສະໜອງຂໍ້ມູນຂ່າວສານ**

- ເປັນແຫຼ່ງຂໍ້ມູນລາຄາທີ່ສຳຄັນ
- ສະທ້ອນໃຫ້ເຫັນອຸປະສົງ-ອຸປະທານໃນຕະຫຼາດ
- ຊ່ວຍໃນການວາງແຜນການຜະລິດແລະການຕະຫຼາດ

# ໜ້າທີ່ຂອງຕະຫຼາດຊື້ຂາຍສິນຄ້າກະເສດລ່ວງໜ້າ

**3.ການສ້າງມາດຕະຖານ**

- ກຳນົດມາດຕະຖານຄຸນນະພາບສິນຄ້າ
- ສ້າງລະບຽບການຊື້-ຂາຍທີ່ເປັນມາດຕະຖານ
- ຮັບປະກັນຄວາມຍຸດຕິທຳໃນການຊື້-ຂາຍ

*ໜ້າທີ່ຂອງຕະຫຼາດຊື້ຂາຍສິນຄ້າກະເສດລ່ວງໜ້າ*

## 4.ການລະດົມທຶນ

- ຊ່ວຍໃຫ້ຊາວກະສິກອນເຂົ້າເຖິງແຫຼ່ງທຶນໄດ້ງ່າຍຂຶ້ນ
- ສາມາດໃຊ້ສັນຍາລ່ວງໜ້າເປັນຫຼັກຊັບຄ້ຳປະກັນ
- ເພີ່ມຄວາມໝັ້ນໃຈໃຫ້ສະຖາບັນການເງິນ

# ໜ້າທີ່ຂອງຕະຫຼາດຊື້ຂາຍສິນຄ້າກະເສດລ່ວງໜ້າ

**5.ການພັດທະນາຕະຫຼາດ**

- ສົ່ງເສີມການຄ້າສິນຄ້າກະເສດໃຫ້ມີປະສິດທິພາບ
- ສ້າງກົນໄກລາຄາທີ່ໂປ່ງໃສ
- ເພີ່ມຂີດຄວາມສາມາດໃນການແຂ່ງຂັນ

# ອົງປະກອບຂອງຕະຫຼາດສິນຄ້າກະເສດລ່ວງໜ້າ

**(1) ຄະນະກຳມະການບໍລິຫານຕະຫຼາດ ເປັນບຸກຄົນທີ່ເຮັດໜ້າທີ່ຄວບຄຸມເບິ່ງແຍງ ແລະ ບໍລິຫານງານຂອງຕະຫຼາດທັງໝົດ ເຮັດໜ້າທີ່**

1. ຈັດຫາສະຖານທີ່ເພື່ອເປັນສູນກາງທີ່ຜູ້ຊື້ຜູ້ຂາຍຈະມາປະມູນລາຄາ
2. ວາງລະບຽບກົດເກນ ແລະ ມາດຕະຖານໃນການຊື້ຂາຍ
3. ລວບລວມ ແລະ ຈັດພິມຂໍ້ມູນຂ່າວສານກ່ຽວກັບຕະຫຼາດ
4. ເປັນຄົນກາງໃນການໄກ່ເກ່ຍຂໍ້ຂັດແຍ່ງຂອງສະມາຊິກຕະຫຼາດ
5. ກຳນົດມາດຕະການໃຫ້ຜູ້ຊື້ ແລະ ຜູ້ຂາຍປະຕິບັດຕາມສັນຍາ

# ອົງປະກອບຂອງຕະຫຼາດສິນຄ້າກະເສດລ່ວງໜ້າ

(2) ຜູ້ຊື້ຂາຍສັນຍາສິນຄ້າກະເສດລ່ວງໜ້າ ເພື່ອປະກັນຄວາມສ່ຽງຈາກການຜັນປ່ຽນຂອງຕະຫຼາດສິນຄ້າ ໂດຍກຸ່ມນີ້ອາດເປັນຊາວກະສິກອນ, ສະຖາບັນກະສິກອນ, ເຈົ້າຂອງຄັງສິນຄ້າໂຮງງານແປຮູບສິນຄ້າກະເສດ ແລະ ພໍ່ຄ້າຄົນກາງໃນລະດັບຕະຫຼາດຕ່າງໆ

# ອົງປະກອບຂອງຕະຫຼາດສິນຄ້າກະເສດລ່ວງໜ້າ

(3) ນັກເກັງກຳໄລ ເປັນຜູ້ທີ່ເຂົ້າມາເຮັດການຊື້ຂາຍສັນຍາໃນຕະຫຼາດສິນຄ້າກະເສດລ່ວງໜ້າ ເພື່ອຫວັງຜົນກຳໄລຈາກການຄາດການການປ່ຽນແປງຕະຫຼາດໃນອານາຄົດ ໂດຍຍອມຮັບຄວາມສ່ຽງທີ່ອາດຈະເກີດຂຶ້ນ ນັກເກັງກຳໄລມີຫຼາຍປະເພດເຊິ່ງອາດແບ່ງປະເພດຕ່າງໆດັ່ງນີ້:

- ນັກລີ້ງທຶນ
- ນັກເກັງກຳໄລລາຄາ
- ນັກສວຍກຳໄລ
- ນັກເກັງກຳໄລລາຍວັນ

# ອົງປະກອບຂອງຕະຫຼາດສິນຄ້າກະເສດລ່ວງໜ້າ

( 4) ບໍລິສັດນາຍໜ້າ ຫຼື ພໍ່ຄ້ານາຍໜ້າ ເຊິ່ງອາດເປັນບຸກຄົນ, ສະມາຄົມບໍລິສັດຈໍາກັດ ຫຼື ຫຸ້ນສ່ວນເປັນສະມາຊິກຂອງຕະຫຼາດລ່ວງໜ້າໂດຍບຸກຄົນກຸ່ມນີ້ເທົ່ານັ້ນທີ່ມີອໍານາດໜ້າທີ່ສົ່ງຄໍາສັ່ງຊື້ຂາຍໂດຍກົງກັບຕະຫຼາດ

( (5) ສໍານັກຫັກບັນຊີ ເຮັດໜ້າທີ່ອໍານວຍຄວາມສະດວກແກ່ລູກຄ້າ ຫຼື ສະມາຊິກຂອງຕະຫຼາດໃນການປິດເປີດ ຫຼື ສະສາງໃບສັນຍາ

# ເງື່ອນໄຂ ແລະ ລັກສະນະສິນຄ້າກະເສດທີ່ເໝາະສົມໃນການເຮັດສັນຍາຊື້ຂາຍໃນຕະຫຼາດລ່ວງໜ້າ

- ເປັນສິນຄ້າທີ່ສາມາດຈັບຕ້ອງແລກປ່ຽນກັນໄດ້
- ລາຄາສິນຄ້າຕ້ອງມີການຜັນປ່ຽນປ່ຽນແປງ
- ເປັນສິນຄ້າທີ່ມີອຸປະສົງ ແລະ ອຸປະທານຫຼາຍ
- ເປັນສິນຄ້າທີ່ມີການຊື້ຂາຍໃນຕະຫຼາດຊື້ຂາຍທັນທີ
- ຂໍ້ມູນສິນຄ້າໃນຕະຫຼາດປະຈຸບັນຈະຕ້ອງມີການເປີດເຜີຍຢ່າງກົງໄປກົງມາ
- ເປັນສິນຄ້າທີ່ລັດຖະບານມີນະໂຍບາຍທີ່ຊັດເຈນໃນການບໍ່ແຊກແຊງຕະຫຼາດຈົນສົ່ງຜົນກະທົບຕໍ່ລາຄາຕະຫຼາດ

# ການປິດສະຖານະຂອງສັນຍາຊື້ຂາຍລ່ວງໜ້າ

ສັນຍາຂາຍຫຼື ຊື້ທີ່ເປີດ ຈະຕ້ອງຖືກຫັກລ້າງດ້ວຍສັນຍາຊື້ຂາຍໃນທີ່ສຸດ ຈຶ່ງຖືວ່າເປັນການສິ້ນສຸດຂອງສັນຍາ ຫຼື ເປັນການປິດສະຖານະຂອງສັນຍາ ເຊິ່ງການຊຳລະສັນຍາເປີດສາມາດດຳເນີນການໄດ້ດັ່ງນີ້:

- ການຊົດເຊີຍລາຍການ

ການສົ່ງມອບດ້ວຍເງິນສົດ

ການສົ່ງມອບສິນຄ້າ

# ຄວາມສຳພັນລະຫວ່າງລາຄາສິນຄ້າໃນຕະຫຼາດຊື້ຂາຍທັນທີກັບລາຄາໃນຕະຫຼາດຊື້ຂາຍລ່ວງໜ້າ

- ຄວາມສຳພັນຈະມີແນວໂນ້ມເຄື່ອນໄປທິດທາງດຽວກັນ ແລະ ເຂົ້າໃກ້ກັນເມື່ອເຂົ້າໃກ້ເດືອນສົ່ງມອບ ທັງນີ້ເພາະປັດໄຈທີ່ມີຜົນກະທົບຕໍ່ການຂຶ້ນລົງຂອງລາຄາຊື້ຂາຍທັນທີຈະກະທົບຕໍ່ການຂຶ້ນລົງຂອງລາຄາລ່ວງໜ້າດ້ວຍ
- ຄວາມສຳພັນລະຫວ່າງລາຄາໃນຕະຫຼາດຊື້ຂາຍທັນທີ ແລະ ຊື້ຂາຍລ່ວງໜ້າ ສາມາດແຍກອອກເປັນ 2 ລັກສະນະ

ຄວາມແຕກຕ່າງລະຫວ່າງລາຄາໃນຕະຫຼາດປະຈຸບັນກັບຕະຫຼາດລ່ວງໜ້າໂດຍລາຄາໃນຕະຫຼາດປະຈຸບັນຢູ່ຕໍ່າກວ່າ ເປັນກໍລະນີຕະຫຼາດປົກກະຕິ



ຄວາມແຕກຕ່າງລະຫວ່າງລາຄາໃນຕະຫຼາດປະຈຸບັນກັບຕະຫຼາດລ່ວງໜ້າໂດຍ ລາຄາໃນຕະຫຼາດປະຈຸບັນຢູ່ສູງກວ່າ ເປັນກໍລະນີຕະຫຼາດຜິດປົກກະຕິ



# Home work

1. ສັນຍາຊື້ຂາຍລ່ວງໜ້າ (Forward Contract) ແລະ ສັນຍາຊື້ຂາຍ ໃນອານາຄົດ (Futures Contract) ແຕກຕ່າງກັນແນວໃດ?
2. ໜ້າທີ່ຂອງຕະຫຼາດຊື້ຂາຍສິນຄ້າກະເສດລ່ວງໜ້າ?
3. ການປິດສະຖານະຂອງສັນຍາຊື້ຂາຍລ່ວງໜ້າ

# Reference


Keodouangkham et al., (2022). Agriculture Economics. Souphanoupovong University.

Slidescarnival. (2022). *Free PowerPoint and Google Slides Templates for your Presentations* [Self Introduction for School Students Pink and Blue Pastel Slides]. https://www.slidescarnival.com/template/self-introduction-for-school-students/29392

# Thank you for attention

Contact:

Email address: phavone@su.edu.la

Tel: +85620 28616221